ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 053 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16/01/2012

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ຫໍສະໝຸດ.

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;

- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 028/ສພຊ, ລົງວັນທີ 21 ທັນວາ 2011 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ຫໍສະໝຸດ;

- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 028/ຄປຈ, ລົງວັນທີ 03 ມັງກອນ 2012.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

<u>ມາດຕາ 1</u> : ປະກາດໃຊ້ກົດໝາຍວ່າດ້ວຍ ຫໍສະໝຸດ.

<u>ມາດຕາ 2</u> : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 028 /ສພຊ

## ມະຕິຕົກລົງ
ຂອງ
**ສະພາແຫ່ງຊາດ ແຫ່ງ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍຫໍສະໝຸດ**

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ຫໍສະໝຸດ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 21 ທັນວາ 2011

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1</u>. ຮັບຮອງເອົາ ກົດໝາຍວ່າດ້ວຍ ຫໍສະໝຸດ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 21 ທັນວາ 2011
ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ເລກທີ 012 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2011

# ກົດໝາຍ

# ວ່າດ້ວຍ ຫໍສະໝຸດ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການກວດກາ ແລະ ການພັດທະນາຫໍສະໝຸດ ເພື່ອສົ່ງເສີມການອ່ານ, ການຄົ້ນຄວ້າ ແລະ ການເຜີຍແຜ່ແນວທາງ, ນະໂຍບາຍ, ລະບຽບກົດໝາຍ, ຜົນງານທາງດ້ານຊັບສິນທາງປັນຍາ, ສະໜອງຄວາມຮູ້ດ້ານຕ່າງໆ ທີ່ມີຄຸນຄ່າ ແລະ ເປັນປະໂຫຍດໃຫ້ແກ່ສັງຄົມ ແນໃສ່ ພັດທະນາຊັບພະຍາກອນມະນຸດ, ປະກອບສ່ວນປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ຫໍສະໝຸດ**

ຫໍສະໝຸດ ແມ່ນ ຄັງຄວາມຮູ້ ຊຶ່ງເປັນສະຖານທີ່ທ້ອນໂຮມ, ເກັບຮັກສາ, ສະສົມປຶ້ມ, ສິ່ງພິມອື່ນ ທີ່ບັນຈຸຄວາມຮູ້ ສະຕິປັນຍາຂອງມວນມະນຸດ ໂດຍມີການຈັດເປັນລະບົບຕາມຫຼັກວິຊາການ ເພື່ອສະໜອງ ແລະໃຫ້ການບໍລິການຂໍ້ມູນຂ່າວສານ ແກ່ມວນຊົນທຸກຊັ້ນຄົນໃນສັງຄົມ.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ບັນນາຮັກສາດ ໝາຍເຖິງ ວິຊາຫໍສະໝຸດ ທີ່ໃຊ້ສິດສອນ ແລະ ຮຳຮຽນ;
2. ບັນນາຮັກ ໝາຍເຖິງ ຜູ້ຮຽນຈົບຫຼັກສູດບັນນາຮັກສາດ;
3. ບັນນານຸກົມແຫ່ງຊາດ ໝາຍເຖິງ ການລວມລາຍຊື່ປຶ້ມຕ່າງໆ ຂອງຊາດ;
4. ໜັງສືຫາຍາກ ໝາຍເຖິງ ໜັງສືທີ່ມີອາຍຸຫ້າສິບປີຂຶ້ນໄປ;
5. ໂສດທັດສະນະວັດຖຸ ໝາຍເຖິງ ວັດຖຸທີ່ບັນທຶກຂໍ້ມູນ ພາບ, ແສງ, ສີ ແລະ ສຽງ;
6. ນິດໄສທັດ ໝາຍເຖິງ ການສ້າງຈິດສຳນຶກໃຫ້ເປັນຄວາມຊິນເຄີຍ;
7. ສະໝຸດເຄື່ອນທີ່ ໝາຍເຖິງ ປຶ້ມ ແລະ ສິ່ງພິມອື່ນ ທີ່ຈັດໃສ່ ຕູ້ ຫຼື ຖົງ, ລົດ, ເຮືອ ທີ່ເຄື່ອນຍ້າຍໄປສະຖານທີ່ຕ່າງໆ ຊຶ່ງດຳເນີນໂດຍຫໍສະໝຸດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຢ່າງຖືກຕ້ອງ;
8. ຊັບພະຍາກອນຫໍສະໝຸດ ໝາຍເຖິງ ປຶ້ມ, ສິ່ງພິມອື່ນ ແລະ ອຸປະກອນຕ່າງໆ;
9. ຫ້ອງສະໝຸດເອເລັກໂຕຣນິກ ໝາຍເຖິງ ການນຳໃຊ້ເຄື່ອງມືທັນສະໄໝເຂົ້າໃນວຽກງານຫໍສະໝຸດ.

ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບວຽກງານຫໍສະໝຸດ

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ລົງທຶນ, ປະກອບສ່ວນເຂົ້າໃນການສ້າງ ແລະ ພັດທະນາຫໍສະໝຸດ ເພື່ອຕອບສະໜອງຂໍ້ມູນຂ່າວສານ ແລະ ການສຶກສາຄົ້ນຄວ້າຫາຄວາມຮູ້ເພີ່ມສະຕິປັນຍາຂອງປະຊາຊົນ ດ້ວຍການວາງນະໂຍບາຍ, ລະບຽບການ, ມາດຕະການທີ່ເໝາະສົມ ເປັນຕົ້ນ ການຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນ ຕາມລະບຽບກົດໝາຍ.

ລັດ ຊຸກຍູ້ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ປູກຈິດສຳນຶກໃຫ້ຮັກການອ່ານ ດ້ວຍວິທີ ສ້າງກິດຈະກຳຕ່າງໆ ຮັບໃຊ້ວຽກງານຫໍສະໝຸດ ເຊັ່ນ ສະໝຸດເຄື່ອນທີ່, ການຄົ້ນຄວ້າ, ການຂຽນ, ການປະດິດແຕ່ງ, ການພິມປຶ້ມ, ການຝຶກອົບຮົມທາງດ້ານວິຊາການຫໍສະໝຸດ ດ້ວຍຮູບການສະໜອງບຸກຄະລາກອນ, ທຶນ, ພາຫະນະ ແລະ ອຸປະກອນທີ່ຈຳເປັນ.

ມາດຕາ 5. ຫຼັກການເຄື່ອນໄຫວວຽກງານຫໍສະໝຸດ

ການເຄື່ອນໄຫວວຽກງານຫໍສະໝຸດ ໃຫ້ປະຕິບັດຕາມຫຼັກການ ຕົ້ນຕໍ ດັ່ງນີ້:

1. ຮັບປະກັນລັກສະນະຊາດ, ວິທະຍາສາດ, ປະຫວັດສາດ, ມະຫາຊົນ ແລະ ກ້າວໜ້າທັນສະໄໝ;

2. ສະໜອງຄວາມຮູ້ທີ່ເປັນປະໂຫຍດ ໃຫ້ແກ່ມວນຊົນ ໃນການພັດທະນາຊັບພະຍາກອນມະນຸດ;
3. ຮັບປະກັນການບໍລິການ ທີ່ໄດ້ມາດຕະຖານ ແລະ ຢູ່ໃນສະພາບແວດລ້ອມທີ່ດີ ໃຫ້ແກ່ສັງຄົມ.

**ມາດຕາ 6. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນວຽກງານ ແລະ ຜູ້ຊົມໃຊ້ ຫໍສະໝຸດ ຢູ່ ສປປ ລາວ.

**ມາດຕາ 7. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືດ້ານວຽກງານຫໍສະໝຸດກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການຊຸກຍູ້ການເຄື່ອນໄຫວດ້ານວິຊາການ, ການແລກປ່ຽນບົດຮຽນ ແລະ ຜົນສຳເລັດໃໝ່ດ້ານເຕັກໂນໂລຊີ ເພື່ອຍົກລະດັບຄວາມຮູ້ ຄວາມສາມາດຂອງພະນັກງານຫໍສະໝຸດ ແນໃສ່ເຮັດໃຫ້ວຽກງານຫໍສະໝຸດມີຄວາມກ້າວໜ້າ, ທັນສະໄໝ, ເຂົ້າຮ່ວມ ແລະ ປະຕິບັດສັນຍາ, ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

# ພາກທີ II

# ວຽກງານຫໍສະໝຸດ

## ໝວດທີ 1

## ປະເພດຫໍສະໝຸດ

**ມາດຕາ 8. ປະເພດຫໍສະໝຸດ**

**ຫໍສະໝຸດ ມີ ຫົກ ປະເພດ ດັ່ງນີ້:**

1. ຫໍສະໝຸດແຫ່ງຊາດ;
2. ຫໍສະໝຸດທ້ອງຖິ່ນ;
3. ຫໍສະໝຸດມະຫາວິທະຍາໄລ, ວິທະຍາໄລ, ສະຖາບັນ, ວິທະຍາຄານ ແລະ ໂຮງຮຽນວິຊາຊີບ;
4. ຫ້ອງສະໝຸດໂຮງຮຽນສາມັນ;
5. ຫ້ອງສະໝຸດສະເພາະ;

6. ຫ້ອງອ່ານ.

ຫໍສະໝຸດແຕ່ລະປະເພດ ມີ ຈຸດປະສົງ ແລະ ໜ້າທີ່ລວມອັນດຽວກັນ ແຕ່ຫາກຕ່າງກັນທາງດ້ານໂຄງປະກອບການຈັດຕັ້ງ, ບຸກຄະລາກອນ, ຖານະ, ຂະໜາດ ແລະ ເປົ້າໝາຍຮັບໃຊ້.

**ມາດຕາ 9. ຫໍສະໝຸດແຫ່ງຊາດ**

ຫໍສະໝຸດແຫ່ງຊາດ ແມ່ນ ຫໍສະໝຸດໃຫຍ່ລະດັບຊາດ ທີ່ສ້າງຕັ້ງຂຶ້ນຢູ່ສູນກາງ ເພື່ອເປັນສູນລວມແຫຼ່ງຂໍ້ມູນຂ່າວສານ ແລະ ເປັນໃຈກາງທາງດ້ານວິຊາການໃຫ້ແກ່ຫໍສະໝຸດຕ່າງໆ ໂດຍຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 10. ຫໍສະໝຸດທ້ອງຖິ່ນ**

ຫໍສະໝຸດທ້ອງຖິ່ນ ແມ່ນ ຫໍສະໝຸດ ທີ່ສ້າງຕັ້ງຂຶ້ນໃນຂັ້ນແຂວງ, ຂັ້ນເມືອງ ແລະ ບ້ານ ເພື່ອຮັບໃຊ້ບໍລິການການອ່ານ ແລະ ເກັບຮັກສາ, ສະໜອງຂໍ້ມູນຂ່າວສານ ແກ່ມວນຊົນທົ່ວໄປ.

**ມາດຕາ 11. ຫໍສະໝຸດມະຫາວິທະຍາໄລ, ວິທະຍາໄລ, ສະຖາບັນ, ວິທະຍາຄານ ແລະ ໂຮງຮຽນວິຊາຊີບ**

ຫໍສະໝຸດມະຫາວິທະຍາໄລ, ວິທະຍາໄລ, ສະຖາບັນ, ວິທະຍາຄານ ແລະ ໂຮງຮຽນວິຊາຊີບ ແມ່ນ ຫໍສະໝຸດທີ່ສ້າງຕັ້ງຂຶ້ນ ເພື່ອຮັບໃຊ້ການສຶກສາ, ການຄົ້ນຄວ້າດ້ານວິຊາການ, ການຮຽນ-ການສອນ ສຳລັບ ຄູອາຈານ, ນັກສຶກສາ, ນັກຄົ້ນຄວ້າ ແລະ ນັກວິຊາການ ເປັນຕົ້ນຕໍ.

**ມາດຕາ 12. ຫ້ອງສະໝຸດໂຮງຮຽນສາມັນ**

ຫ້ອງສະໝຸດໂຮງຮຽນສາມັນ ແມ່ນ ຫ້ອງສະໝຸດ ທີ່ສ້າງຕັ້ງຂຶ້ນ ເພື່ອສະໜອງຂໍ້ມູນ-ຂ່າວສານ ສຳລັບການອ່ານ, ການຄົ້ນຄວ້າ, ການຮຽນ-ການສອນ ຂອງ ຄູ ແລະ ນັກຮຽນ ເປັນຕົ້ນຕໍ.

**ມາດຕາ 13. ຫ້ອງສະໝຸດສະເພາະ**

ຫ້ອງສະໝຸດສະເພາະ ແມ່ນ ຫ້ອງສະໝຸດທີ່ສ້າງຕັ້ງຂຶ້ນເພື່ອຮັບໃຊ້ສະເພາະພາຍໃນກະຊວງ, ສຳນັກງານ, ອົງການ, ກົມກອງ, ໂຮງໝໍ, ໂຮງງານ, ບໍລິສັດ, ສາສະນະສະຖານ ເພື່ອຮັບໃຊ້ການອ່ານ, ການຄົ້ນຄວ້າ ເພື່ອເພີ່ມຄວາມຮູ້ຂອງພະນັກງານ, ທະຫານ, ຕຳຫຼວດ, ກຳມະກອນ, ນັກທຸລະກິດ, ນັກບວດ ແລະ ອື່ນໆ ໃນຫົວໜ່ວຍຂອງຕົນ ເປັນຕົ້ນຕໍ.

ມາດຕາ 14. ຫ້ອງອ່ານ

ຫ້ອງອ່ານ ແມ່ນ ຫ້ອງໃດໜຶ່ງທີ່ຈັດໃນບ່ອນເໝາະສົມ ເຊັ່ນ ຫ້ອງອ່ານຂອງຄອບຄົວ, ບຸກຄົນ ແລ້ວນຳເອົາປຶ້ມ ຫຼື ສິ່ງພິມອື່ນ ມາຈັດວາງໄວ້ ເພື່ອຮັບໃຊ້ການອ່ານ, ການຄົ້ນຄວ້າ ຊຶ່ງບໍ່ໄດ້ຈັດຕາມລະບົບຫໍສະໝຸດ.

## ໝວດທີ 2
## ວຽກງານຫໍສະໝຸດ

ມາດຕາ 15. ການຈັດວຽກງານຫໍສະໝຸດ

ວຽກງານຫໍສະໝຸດ ຈັດຕາມລະບົບວິທີວິທະຍາ ຂອງບັນນາຮັກ ຄື:

1. ການຂົນຂວາຍ ຊັບພະຍາກອນຫໍສະໝຸດ;
2. ການມອບປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ;
3. ການວິເຄາະຊັບພະຍາກອນຫໍສະໝຸດ;
4. ການບໍລິການການອ່ານ;
5. ການສົ່ງເສີມການອ່ານ;
6. ການປົກປັກຮັກສາ ຊັບພະຍາກອນຫໍສະໝຸດ.

ມາດຕາ 16. ການຂົນຂວາຍຊັບພະຍາກອນຫໍສະໝຸດ

ການຂົນຂວາຍຊັບພະຍາກອນຫໍສະໝຸດ ແມ່ນ ການຈັດຊື້, ການຮັບບໍລິຈາກ, ການແລກປ່ຽນ, ການຜະລິດຂຶ້ນເອງ, ການໂອນກຳມະສິດ, ການມອບປຶ້ມ, ສິ່ງພິມອື່ນ, ໂສດທັດສະນະວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ເພື່ອອະນຸລັກ ແລະ ສົ່ງເສີມການອ່ານ.

ມາດຕາ 17. ການມອບປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ຈັດພິມປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ຕ້ອງມອບໃຫ້ຫໍສະໝຸດແຫ່ງຊາດ ຢ່າງຕ່ຳບໍ່ໃຫ້ຫຼຸດຈຳນວນ ສາມຫົວ ຫຼື ສາມອັນ ເພື່ອເກັບ ຮັກສາ, ເຜີຍແຜ່ຜົນງານ ຂອງຜູ້ແຕ່ງ ແລະ ສົ່ງເສີມການອ່ານ.

### ມາດຕາ 18. ການວິເຄາະຊັບພະຍາກອນຫໍສະໝຸດ

ການວິເຄາະຊັບພະຍາກອນຫໍສະໝຸດ ແມ່ນ ການຈັດໝວດໝູ່, ກຳນົດຫົວເລື່ອງ, ສ້າງຖານຂໍ້ມູນ, ຈັດທຳບັດລາຍການ, ບົດສັດຫຍໍ້ໜັງສື, ບັນນານຸກົມແຫ່ງຊາດ, ເລກໝາຍປຶ້ມມາດຕະຖານສາກົນ ແລະ ການຈັດລຽງລຳດັບຊັບພະຍາກອນຫໍສະໝຸດ ເພື່ອໃຫ້ການບໍລິການ.

### ມາດຕາ 19. ການບໍລິການການອ່ານ

ການບໍລິການການອ່ານ ແມ່ນ ການໃຫ້ອ່ານກັບທີ່, ການໃຫ້ຢືມ-ສົ່ງປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ, ການບໍລິການໜັງສືອ້າງອີງ, ໜັງສືຫາຍາກ, ອິນເຕີເນັດ ແລະ ການບໍລິການຕອບຄຳຖາມ ແລະ ຊອກຫາຂໍ້ມູນເພື່ອຊ່ວຍການຄົ້ນຄວ້າ.

### ມາດຕາ 20. ການສົ່ງເສີມການອ່ານ

ການສົ່ງເສີມການອ່ານ ແມ່ນ ການຈັດກິດຈະກຳຕ່າງໆ ກ່ຽວກັບການອ່ານ ເຊັ່ນ ການບໍລິການສະໝຸດເຄື່ອນທີ່, ການເລົ່ານິທານ, ການຖາມ-ຕອບຄຳທວາຍ, ການອ່ານກາບກອນ, ສຸພາສິດ, ການຮ້ອງເພງ, ຂັບ-ລຳ, ຟ້ອນ, ແຕ້ມຮູບ, ປະດິດເຄື່ອງຫຼິ້ນ, ການນຳໃຊ້ອິນເຕີເນັດ ແລະ ການສະແດງລະຄອນ.

### ມາດຕາ 21. ການປົກປັກຮັກສາ ຊັບພະຍາກອນຫໍສະໝຸດ

ຊັບພະຍາກອນຫໍສະໝຸດ ໂດຍສະເພາະສິ່ງທີ່ມີຄຸນຄ່າໃນຫໍສະໝຸດ ຕ້ອງປົກປັກຮັກສາໄວ້ໃຫ້ຍືນຍົງ, ຖ້າມີການເປ່ເພ ຈີກຂາດ ຫຼື ໃຊ້ບໍ່ໄດ້ ໃຫ້ສ້ອມແປງຄືນສູ່ສະພາບເດີມ ຫຼື ຕ້ອງກ່າຍຄືນໃໝ່ດ້ວຍຮູບການຕ່າງໆ ແຕ່ຕ້ອງບົ່ງບອກໃຫ້ແຈ້ງວ່າ ຄັດມາຈາກປຶ້ມຫົວໃດ, ວັນທີ ເດືອນ ປີໃດ.

ຖ້າຫໍສະໝຸດຕ້ອງການປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ທີ່ມີຄ່າເຂົ້າຫໍສະໝຸດ ຕ້ອງທົດແທນຄ່າໃຫ້ຜູ້ເປັນເຈົ້າຂອງ ຫຼື ຜູ້ປົກປັກຮັກສາ ຕາມຄວາມເໝາະສົມ.

ບຸກຄົນທີ່ໄດ້ຢືມປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ແລ້ວເຮັດໃຫ້ເສຍຫາຍ, ເປ່ເພ ຈີກຂາດ ຫຼື ໃຊ້ບໍ່ໄດ້ ຕ້ອງທົດແທນຄ່າເສຍຫາຍໃຫ້ຫໍສະໝຸດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ III

# ການສ້າງຕັ້ງ ແລະ ການຈັດຕັ້ງບໍລິຫານ ຫໍສະໝຸດ

## ໝວດທີ 1

## ການສ້າງຕັ້ງຫໍສະໝຸດ

**ມາດຕາ 22. ຜູ້ມີສິດສ້າງຕັ້ງຫໍສະໝຸດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີສິດສ້າງຕັ້ງ ຫໍສະໝຸດ ຂອງຕົນຂຶ້ນ ຢູ່ ສປປ ລາວ ໂດຍປະຕິບັດຕາມຂັ້ນຕອນ ແລະ ເງື່ອນໄຂທີ່ໄດ້ກໍານົດໄວ້ ໃນມາດຕາ 23 ແລະ 24 ຂອງກົດໝາຍສະບັບນີ້.

**ມາດຕາ 23. ການຮ້ອງຂໍສ້າງຕັ້ງຫໍສະໝຸດ**

ຜູ້ທີ່ມີຈຸດປະສົງສ້າງຕັ້ງຫໍສະໝຸດ ແຕ່ລະປະເພດ ຕ້ອງຍື່ນຄໍາຮ້ອງຕໍ່ອົງການຄຸ້ມຄອງ ຫໍສະໝຸດ.

ອົງການຄຸ້ມຄອງຫໍສະໝຸດ ຕ້ອງຄົ້ນຄວ້າພິຈາລະນາ ຢ່າງຊ້າບໍ່ໃຫ້ເກີນ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງເປັນຕົ້ນໄປ. ໃນກໍລະນີທີ່ບໍ່ໄດ້ອະນຸຍາດ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ພ້ອມດ້ວຍເຫດຜົນເປັນລາຍລັກອັກສອນ.

ສໍາລັບຫ້ອງອ່ານນັ້ນ ສາມາດສ້າງຕັ້ງໄດ້ ໂດຍບໍ່ຍື່ນຄໍາຮ້ອງຂໍອະນຸຍາດ.

**ມາດຕາ 24. ເງື່ອນໄຂການສ້າງຕັ້ງຫໍສະໝຸດ**

ການສ້າງຕັ້ງຫໍສະໝຸດ ຍົກເວັ້ນຫ້ອງອ່ານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຊື່ຫໍສະໝຸດ, ຈຸດປະສົງ ແລະ ເປົ້າໝາຍຂອງຫໍສະໝຸດ;
2. ປື້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ຕາມຄວາມເໝາະສົມຂອງແຕ່ລະປະເພດຫໍສະໝຸດ;
3. ພື້ນຖານໂຄງລ່າງທີ່ຮັບປະກັນ ເປັນຕົ້ນ ອາຄານ, ສະຖານທີ່ ແລະ ອຸປະກອນຮັບໃຊ້ທີ່ຈໍາເປັນ;
4. ບັນນາຮັກ ຫຼື ພະນັກງານ ທີ່ໄດ້ຜ່ານການຝຶກອົບຮົມວຽກງານຫໍສະໝຸດ;
5. ທຶນ ເພື່ອຮັບປະກັນໃຫ້ຫໍສະໝຸດສາມາດເຄື່ອນໄຫວໄດ້ຢ່າງເປັນປົກກະຕິ.

ມາດຕາ 25. ການປ່ຽນແປງ ຫຼື ຍຸບເລີກ ຫໍສະໝຸດ

ການປ່ຽນແປງຫໍສະໝຸດ ຈະມີຂຶ້ນໃນກໍລະນີທີ່ມີ ການປ່ຽນຊື່, ການຍົກຍ້າຍສະຖານທີ່ ຊຶ່ງເຈົ້າຂອງຫໍສະໝຸດຕ້ອງຂໍອະນຸຍາດ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ເພື່ອພິຈາລະນາ ພາຍໃນກຳນົດເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

ການຍຸບເລີກຫໍສະໝຸດ ຈະມີຂຶ້ນໃນກໍລະນີທີ່ ເຈົ້າຂອງຫໍສະໝຸດບໍ່ສາມາດສືບຕໍ່ບໍລິການ ຫຼື ຖືກຖອນໃບອະນຸຍາດດຳເນີນກິດຈະການ ຍ້ອນມີການລະເມີດລະບຽບກົດໝາຍ. ໃນກໍລະນີການຍຸບເລີກຍ້ອນບໍ່ມີຄວາມສາມາດສືບຕໍ່ບໍລິການໄດ້ນັ້ນ ຕ້ອງລາຍງານເປັນລາຍລັກອັກສອນຕໍ່ອົງການຄຸ້ມຄອງທີ່ກ່ຽວຂ້ອງ ພາຍໃນກຳນົດເວລາ ເຈັດວັນ ລັດຖະການ ພາຍຫຼັງການຍຸບເລີກ.

## ໝວດທີ 2
## ການຈັດຕັ້ງບໍລິຫານຫໍສະໝຸດ

ມາດຕາ 26. ໂຄງປະກອບບຸກຄະລາກອນຫໍສະໝຸດ

**ບຸກຄະລາກອນຫໍສະໝຸດ ປະກອບດ້ວຍ:**

1. ເຈົ້າຂອງຫໍສະໝຸດ;
2. ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ຫໍສະໝຸດ;
3. ພະນັກງານຫໍສະໝຸດ;
4. ຜູ້ຮ່ວມງານຫໍສະໝຸດ.

ສຳລັບຫໍສະໝຸດແຕ່ປະເພດທີ 4 ລົງມາ ໃຫ້ປະກອບບຸກຄະລາກອນ ຕາມຄວາມເໝາະສົມ.

ມາດຕາ 27. ເຈົ້າຂອງຫໍສະໝຸດ

ເຈົ້າຂອງຫໍສະໝຸດ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການກ່ຽວກັບຫໍສະໝຸດ.

**ເຈົ້າຂອງຫໍສະໝຸດ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ກຳນົດ ທິດທາງ, ແຜນການເຄື່ອນໄຫວວຽກງານຫໍສະໝຸດ;
2. ຈັດຕັ້ງ, ຊີ້ນຳ, ຄຸ້ມຄອງ ແລະ ກວດກາ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຫໍສະໝຸດຂອງຕົນ;
3. ສະເໜີສ້າງຕັ້ງ, ປ່ຽນແປງ ຫຼື ຍຸບເລີກຫໍສະໝຸດຂອງຕົນ;
4. ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການຫໍສະໝຸດ;

5. ຊຸກຍູ້, ສົ່ງເສີມການມອບປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ທີ່ມີຄຸນຄ່າ, ການຂຽນ, ປະດິດແຕ່ງເລື່ອງ ໃດໜຶ່ງທີ່ ຫໍສະໝຸດຕ້ອງການ;
6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຫໍສະໝຸດ;
7. ອອກລະບຽບການພາຍໃນຫໍສະໝຸດ, ກໍານົດການເກັບຄ່າບັດສະມາຊິກຜູ້ໃຊ້ບໍລິການຫໍສະໝຸດ ແລະ ຄ່າບໍລິການຕ່າງໆ;
8. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຫໍສະໝຸດຂອງຕົນ ຕໍ່ຂະແໜງການ ທີ່ຕົນຂຶ້ນກັບຢ່າງເປັນປົກກະຕິ.

## ມາດຕາ 28. ຜູ້ອໍານວຍການ ແລະ ຮອງຜູ້ອໍານວຍການ

ຜູ້ອໍານວຍການ ແລະ ຮອງຜູ້ອໍານວຍການ ແມ່ນ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ຈາກເຈົ້າຂອງຫໍສະໝຸດ ຍົກເວັ້ນຫ້ອງອ່ານ.

ຜູ້ອໍານວຍການ ເປັນຜູ້ຮັບຜິດຊອບຊີ້ນໍາລວມວຽກງານຫໍສະໝຸດ.

ຮອງຜູ້ອໍານວຍການ ເປັນຜູ້ຊ່ວຍວຽກຜູ້ອໍານວຍການ ແລະ ຮັບຜິດຊອບວຽກງານວິຊາການໃດໜຶ່ງ ທີ່ໄດ້ຮັບມອບໝາຍ ແລະ ເປັນຜູ້ວ່າການແທນຜູ້ອໍານວຍການ ຕາມການມອບໝາຍ ໃນເວລາຜູ້ອໍານວຍການ ບໍ່ສາມາດປະຕິບັດໜ້າທີ່ໄດ້.

## ມາດຕາ 29. ມາດຕະຖານຂອງຜູ້ອໍານວຍການ ແລະ ຮອງຜູ້ອໍານວຍການ

ຜູ້ອໍານວຍການ ແລະ ຮອງຜູ້ອໍານວຍການ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີພູມລໍາເນົາຖາວອນຢູ່ ສປປ ລາວ;
2. ມີອາຍຸ ແຕ່ສິບແປດ ປີຂຶ້ນໄປ;
3. ມີຄວາມຮູ້ທາງດ້ານບັນນາຮັກສາດ ຫຼື ໄດ້ຜ່ານການຝຶກອົບຮົມວຽກງານຫໍສະໝຸດ;
4. ມີຄວາມສາມາດ ດ້ານການຄຸ້ມຄອງບໍລິຫານທົ່ວໄປ, ຮູ້ນໍາໃຊ້ຄອມພິວເຕີ ແລະ ຮູ້ພາສາຕ່າງປະເທດໃດໜຶ່ງ ທີ່ແນ່ນອນ;
5. ມີລະດັບການສຶກສາແຕ່ຊັ້ນກາງຂຶ້ນໄປ;
6. ມີສຸຂະພາບດີ.

### ມາດຕາ 30. ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ

**ຜູ້ອຳນວຍການຫໍສະໝຸດ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:**

1. ຄົ້ນຄວ້າ ຜັນຂະຫຍາຍທິດທາງ, ແຜນການກ່ຽວກັບການເຄື່ອນໄຫວວຽກງານຫໍສະໝຸດ ແລ້ວສະເໜີຕໍ່ເຈົ້າຂອງຫໍສະໝຸດ ພິຈາລະນາ;
2. ວາງແຜນການ, ສ້າງໂຄງການໃນການຈັດຫາປຶ້ມ, ສິ່ງພິມອື່ນ, ໂສດທັດສະນະວັດຖຸ ແລະ ວັດຖຸອຸປະກອນຂອງຫໍສະໝຸດ;
3. ສ້າງກົງຈັກການຈັດຕັ້ງ, ບຳລຸງ ຍົກລະດັບພະນັກງານ ແລະ ຄຸ້ມຄອງຊັບສິນພາຍໃນຫໍສະໝຸດ;
4. ຄົ້ນຄວ້າອອກລະບຽບການຕ່າງໆ ພາຍໃນຫໍສະໝຸດ ເພື່ອສະເໜີເຈົ້າຂອງຫໍສະໝຸດ ພິຈາລະນາ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການເຄື່ອນໄຫວວຽກງານຫໍສະໝຸດ. ສຳລັບການພົວພັນກັບຕ່າງປະເທດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງຫໍສະໝຸດ;
6. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານຫໍສະໝຸດຂອງຕົນ ຕໍ່ເຈົ້າຂອງຫໍສະໝຸດ ຢ່າງເປັນປົກກະຕິ.

### ມາດຕາ 31. ສິດ ແລະ ໜ້າທີ່ ຂອງຮອງຜູ້ອຳນວຍການ

ຮອງຜູ້ອຳນວຍການ ມີສິດ ແລະ ໜ້າທີ່ ຊ່ວຍຜູ້ອຳນວຍການ, ຮັບຜິດຊອບວຽກງານ ວິຊາການໃດໜຶ່ງ, ປະຕິບັດສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ ໃນເວລາທີ່ຜູ້ອຳນວຍການ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຫຼື ຕາມການມອບໝາຍ.

### ມາດຕາ 32. ພະນັກງານຫໍສະໝຸດ

ພະນັກງານຫໍສະໝຸດ ແມ່ນ ບັນນາຮັກ ແລະ ບຸກຄົນ ທີ່ເຮັດວຽກປະຈຳການໃນຫໍສະໝຸດ.

ສິດ ແລະ ໜ້າທີ່ ຂອງພະນັກງານຫໍສະໝຸດ ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງຫໍສະໝຸດ.

### ມາດຕາ 33. ຜູ້ຮ່ວມງານຫໍສະໝຸດ

ຜູ້ຮ່ວມງານຫໍສະໝຸດ ແມ່ນ ຜູ້ທີ່ເຮັດວຽກບໍ່ປະຈຳການ ທີ່ມີປະສົບການດ້ານວຽກງານຫໍສະໝຸດ ໂດຍໄດ້ຮັບຄ່າແຮງງານ ແລະ ນະໂຍບາຍອື່ນ ຈາກຫໍສະໝຸດ.

ສິດ ແລະ ໜ້າທີ່ຂອງຜູ້ຮ່ວມງານ ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງຫໍສະໝຸດ.

# ພາກທີ IV
# ທຶນຫໍສະໝຸດຂອງລັດ

**ມາດຕາ 34. ແຫຼ່ງທຶນຫໍສະໝຸດຂອງລັດ**

ແຫຼ່ງທຶນຫໍສະໝຸດຂອງລັດ ໄດ້ມາຈາກ:

- ງົບປະມານຂອງລັດ;
- ການບໍລິການດ້ານວິຊາການ;
- ການປະກອບສ່ວນຂອງສັງຄົມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ການຊ່ວຍເຫຼືອຂອງສາກົນ.

**ມາດຕາ 35. ການຄຸ້ມຄອງ ແລະ ນໍາໃຊ້ທຶນຫໍສະໝຸດຂອງລັດ**

ການຄຸ້ມຄອງ ແລະ ນໍາໃຊ້ທຶນຫໍສະໝຸດຂອງລັດ ຕ້ອງສອດຄ່ອງກັບຈຸດປະສົງ, ເປົ້າໝາຍ ແລະ ຖືກຕ້ອງຕາມລະບຽບການເງິນຂອງລັດ.

# ພາກທີ V
# ຂໍ້ຫ້າມ

**ມາດຕາ 36. ຂໍ້ຫ້າມສໍາລັບບຸກຄະລາກອນຫໍສະໝຸດ**

ຫ້າມບຸກຄະລາກອນຫໍສະໝຸດ ມີພຶດຕິກໍາ ດັ່ງນີ້:

1. ນໍາເອົາປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ທີ່ມີເນື້ອໃນຂັດກັບແນວທາງ, ນະໂຍບາຍ, ຄວາມໝັ້ນຄົງ, ຄວາມສະຫງົບສຸກ, ວັດທະນະທໍາ, ຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ ແລະ ເນື້ອໃນອື່ນທີ່ຂັດກັບລະບຽບກົດໝາຍ ເຂົ້າບໍລິການ ຍົກເວັ້ນຫ້ອງອ່ານພິເສດ ຂອງຫໍສະໝຸດແຫ່ງຊາດ ເພື່ອຮັບໃຊ້ການຄົ້ນຄວ້າສະເພາະກິດຂອງລັດ ຕາມການມອບໝາຍ;
2. ທໍາລາຍ, ສ້າງຄວາມເສັຍຫາຍໃຫ້ແກ່ ຊັບພະຍາກອນຫໍສະໝຸດ ແລະ ຫໍສະໝຸດ;
3. ສວຍໃຊ້ຫໍສະໝຸດ ໃນທາງບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
4. ບໍລິການຂໍ້ມູນສໍາຄັນຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;
5. ເກັບຄ່າທໍານຽມ, ຄ່າບໍລິການ ເກີນອັດຕາທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ;

6. ນຳເອົາປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ຂອງຫໍສະໝຸດໄປຂາຍ, ມອບ, ແລກປ່ຽນໃຫ້ບຸກຄົນອື່ນ ຫຼື ເອົາເປັນຂອງສ່ວນຕົວ ໂດຍບໍ່ໄດ້ຮັບອະນຸຍາດ;
7. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍ.

### ມາດຕາ 37. ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການຫໍສະໝຸດ

ຫ້າມຜູ້ໃຊ້ບໍລິການຫໍສະໝຸດ ມີພຶດຕິກຳ ດັ່ງນີ້:

1. ນຳເອົາປຶ້ມ, ສິ່ງພິມ, ໂສດທັດສະນະວັດຖຸ ແລະ ອຸປະກອນອື່ນໆ ເຂົ້າ ຫຼື ອອກຈາກຫໍສະໝຸດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກພະນັກງານຫໍສະໝຸດ;
2. ທຳລາຍ, ສ້າງຄວາມເສັຍຫາຍໃຫ້ແກ່ ຊັບພະຍາກອນຫໍສະໝຸດ ແລະ ຫໍສະໝຸດ;
3. ສວຍໃຊ້ຫໍສະໝຸດ ໃນທາງບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
4. ໃສ່ຮ້າຍ, ບິດເບືອນຄວາມເປັນຈິງ ໃນການປະຕິບັດໜ້າທີ່ວຽກງານຂອງພະນັກງານຫໍສະໝຸດ;
5. ລະເມີດລະບຽບການຂອງຫໍສະໝຸດ;
6. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍ.

### ມາດຕາ 38. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ທຳລາຍ, ສ້າງຄວາມເສັຍຫາຍໃຫ້ແກ່ ຊັບພະຍາກອນຫໍສະໝຸດ ແລະ ຫໍສະໝຸດ;
2. ສ້າງຕັ້ງຫໍສະໝຸດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ຫໍສະໝຸດ ໃນທາງບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
4. ໃສ່ຮ້າຍ, ບິດເບືອນຄວາມເປັນຈິງ ໃນການປະຕິບັດໜ້າທີ່ວຽກງານ ຂອງພະນັກງານຫໍສະໝຸດ;
5. ນາບຂູ່, ຂັດຂວາງການມາຊົມໃຊ້ ແລະ ການປະກອບສ່ວນພັດທະນາຫໍສະໝຸດ;
6. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍ.

# ພາກທີ VI

# ການຄຸ້ມຄອງ ແລະ ການກວດກາ

## ໝວດທີ 1

## ການຄຸ້ມຄອງຫໍສະໝຸດ

**ມາດຕາ 39. ອົງການຄຸ້ມຄອງຫໍສະໝຸດ**

ລັດຖະບານເປັນຜູ້ຄຸ້ມຄອງຫໍສະໝຸດ ຢ່າງລວມສູນ ແລະ ເປັນເອກະພາບ ໃນທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນໃຈກາງໃນການຄຸ້ມຄອງ ດ້ວຍການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ອົງການຄຸ້ມຄອງຫໍສະໝຸດ ປະກອບດ້ວຍ:**

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

**ມາດຕາ 40. ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານຫໍສະໝຸດ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮ່າງນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບຫໍສະໝຸດ ເພື່ອສະເໜີລັດຖະບານ ແລະ ຈັດຕັ້ງປະຕິບັດພາຍຫຼັງ ລັດຖະບານ ຕົກລົງແລ້ວ;
2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບຫໍສະໝຸດ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ ການເຄື່ອນໄຫວຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການ ກ່ຽວກັບຫໍສະໝຸດ;
4. ຂະຫຍາຍຫໍສະໝຸດ, ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານຫໍສະໝຸດ ທາງດ້ານການເມືອງ ແລະ ວິຊາສະເພາະ;

5. ອະນຸຍາດສ້າງຕັ້ງ, ປ່ຽນແປງ ແລະ ຍຸບເລີກ ຫໍສະໝຸດແຫ່ງຊາດ, ຫໍສະໝຸດມະຫາວິທະຍາໄລແຫ່ງຊາດ, ສະຖາບັນ, ວິທະຍາຄານ, ຫ້ອງສະໝຸດສະເພາະ ທີ່ບໍລິການການອ່ານໃຫ້ແກ່ສັງຄົມ;
6. ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງຜູ້ອໍານວຍການ, ຮອງຜູ້ອໍານວຍການ ແລະ ສັບຊ້ອນພະນັກງານ ຂອງຫໍສະໝຸດແຫ່ງຊາດ;
7. ເກັບກູ້, ທໍາລາຍປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ທີ່ບໍ່ຖືກຕ້ອງ ຊຶ່ງຢູ່ໃນຄວາມຮັບຜິດຊອບຂອງຕົນ;
8. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກງານຫໍສະໝຸດ;
9. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຫໍສະໝຸດ;
10. ສະຫຼຸບ, ລາຍງານການປະເມີນຜົນການຈັດຕັ້ງປະຕິບັດວຽກງານຫໍສະໝຸດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 41. ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານຫໍສະໝຸດ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຫໍສະໝຸດມາເປັນລະບຽບການ, ແຜນການ, ໂຄງການ ແລ້ວນໍາມາຈັດຕັ້ງປະຕິບັດ;
2. ສໍາຫຼວດ ແລະ ເກັບກໍາຂໍ້ມູນ ກ່ຽວກັບຫໍສະໝຸດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບຫໍສະໝຸດ;
4. ອະນຸຍາດ ສ້າງຕັ້ງ, ປ່ຽນແປງ ແລະ ຍຸບເລີກ ຫໍສະໝຸດຂັ້ນແຂວງ, ມະຫາວິທະຍາໄລ, ວິທະຍາໄລ ແລະ ໂຮງຮຽນວິຊາຊີບ;
5. ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງຜູ້ອໍານວຍການ, ຮອງຜູ້ອໍານວຍການ ແລະ ສັບຊ້ອນພະນັກງານ ຂອງຫໍສະໝຸດຂັ້ນແຂວງ;
6. ຊີ້ນໍາ, ຊຸກຍູ້ ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເມືອງ, ເທດສະບານ ໃນການຈັດຕັ້ງປະຕິບັດວຽກງານຫໍສະໝຸດ;

7. ເກັບກູ້, ທຳລາຍປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸທີ່ບໍ່ຖືກຕ້ອງ ຊຶ່ງຢູ່ໃນຄວາມຮັບຜິດຊອບຂອງຕົນ;
8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກງານຫໍສະໝຸດ;
9. ພົວພັນ ແລະ ຮ່ວມມືດ້ານຫໍສະໝຸດ ກັບຕ່າງປະເທດ ຕາມການມອບໝາຍຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
10. ສະຫຼຸບລາຍງານການປະເມີນຜົນການຈັດຕັ້ງປະຕິບັດວຽກງານຫໍສະໝຸດ ຕໍ່ຂັ້ນເທິງຖັດຕົນ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 42. ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານຫໍສະໝຸດ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການກ່ຽວກັບວຽກງານຫໍສະໝຸດ;
2. ສຳຫຼວດ, ເກັບກຳຂໍ້ມູນສະຖານທີ່ປຸກສ້າງ ເພື່ອຂະຫຍາຍຫໍສະໝຸດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບຫໍສະໝຸດໃຫ້ແກ່ບຸກຄະລາກອນ ຢູ່ໃນຄວາມຮັບຜິດຊອບຂອງຕົນ;
4. ອະນຸຍາດ ການສ້າງຕັ້ງ, ປ່ຽນແປງ ແລະ ຍຸບເລີກ ຫໍສະໝຸດຂັ້ນເມືອງ, ຫ້ອງສະໝຸດ ໂຮງຮຽນສາມັນ;
5. ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຜູ້ອຳນວຍການ, ຮອງຜູ້ອຳນວຍການ ແລະ ສັບຊ້ອນພະນັກງານ ຂອງຫໍສະໝຸດຂັ້ນເມືອງ;
6. ເກັບກູ້, ທຳລາຍປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ທີ່ບໍ່ຖືກຕ້ອງ ຊຶ່ງຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານຫໍສະໝຸດ ຕາມພາລະບົດບາດຂອງຕົນ;
8. ສະຫຼຸບ, ລາຍງານການປະເມີນຜົນການຈັດຕັ້ງປະຕິບັດວຽກງານຫໍສະໝຸດ ຕໍ່ຂັ້ນເທິງຖັດຕົນ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 43. ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ

ໃນການຄຸ້ມຄອງວຽກງານຫໍສະໝຸດ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ ແລະ ໂຄງການກ່ຽວກັບວຽກງານຫໍສະໝຸດພາຍໃນບ້ານ;
2. ສຳຫຼວດ, ເກັບກຳຂໍ້ມູນສະຖານທີ່ປຸກສ້າງ ແລະ ລະດົມທຶນເພື່ອຂະຫຍາຍຫ້ອງອ່ານໃນຂອບເຂດບ້ານ;
3. ຈັດຕັ້ງເຜີຍແຜ່ ລະບຽບການກ່ຽວກັບ ການນຳໃຊ້ຫ້ອງອ່ານ ໃຫ້ແກ່ຊາວບ້ານ;
4. ຄຸ້ມຄອງຫ້ອງອ່ານຂອງບ້ານ, ສ່ວນຫ້ອງອ່ານອື່ນ ແມ່ນເຈົ້າຂອງຫ້ອງອ່ານນັ້ນ ເປັນຜູ້ຄຸ້ມຄອງ ແລະ ຮັບຜິດຊອບຕໍ່ລະບຽບກົດໝາຍ;
5. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານຫໍສະໝຸດພາຍໃນບ້ານຂອງຕົນ;
6. ສະຫຼຸບ, ລາຍງານການປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຫ້ອງອ່ານຂອງບ້ານຕໍ່ຂັ້ນເທິງຖັດຕົນ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 44. ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ

ຂະແໜງການອື່ນທີ່ກ່ຽວຂ້ອງກັບວຽກງານຫໍສະໝຸດ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານຫໍສະໝຸດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

### ມາດຕາ 45. ສະມາຄົມຫໍສະໝຸດ

ສະມາຄົມຫໍສະໝຸດ ແມ່ນ ການຈັດຕັ້ງສັງຄົມວິຊາຊີບຂອງຫໍສະໝຸດ ຊຶ່ງໄດ້ຮັບການອະນຸມັດສ້າງຕັ້ງ ໂດຍອົງການລັດທີ່ກ່ຽວຂ້ອງ, ມີພາລະບົດບາດ ເປັນໃຈກາງໃນການຕິດຕໍ່, ພົວພັນ, ປະສານສົມທົບວຽກງານລະຫວ່າງຫໍສະໝຸດຕ່າງໆ, ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ມີໜ້າທີ່ປົກປ້ອງສິດ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ ທັງເຂົ້າຮ່ວມໃນການປະຕິບັດແນວທາງ, ນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບວຽກງານ ຫໍສະໝຸດ.

ສິດ ແລະ ໜ້າທີ່ຂອງສະມາຄົມຫໍສະໝຸດ ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ ຫໍສະໝຸດ.

# ໝວດທີ 2

## ການກວດກາຫໍສະໝຸດ

**ມາດຕາ 46. ອົງການກວດກາຫໍສະໝຸດ**

ອົງການກວດກາຫໍສະໝຸດ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງຫໍສະໝຸດ ທີ່ໄດ້ກຳນົດໄວ້ ໃນມາດຕາ 39 ຂອງກົດໝາຍສະບັບນີ້.

**ມາດຕາ 47. ເນື້ອໃນການກວດກາ**

ການກວດກາຫໍສະໝຸດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ເນື້ອໃນຂອງປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ຕາມຫຼັກການວິຊາການບັນນາຮັກ;
2. ການສ້າງ, ການບຳລຸງ, ການນຳໃຊ້ ແລະ ການປະຕິບັດນະໂຍບາຍ ຕໍ່ພະນັກງານຫໍສະໝຸດ;
3. ການປະກອບ ແລະ ນຳໃຊ້ພື້ນຖານວັດຖຸ, ພາຫະນະ, ອຸປະກອນ, ທຶນ ແລະ ງົບປະມານ ຂອງຫໍສະໝຸດ;
4. ສະຖານທີ່, ແຜນຜັງ, ເນື້ອທີ່ການປຸກສ້າງ ແລະ ການປະຕິບັດແຜນການ, ໂຄງການຂອງຫໍສະໝຸດ ແຕ່ລະໄລຍະ;
5. ການປະຕິບັດລະບຽບກົດໝາຍກ່ຽວກັບຫໍສະໝຸດ.

**ມາດຕາ 48. ຮູບການການກວດກາ**

ການກວດກາຫໍສະໝຸດ ມີ ສາມ ຮູບການ ດັ່ງນີ້:

1. ກວດກາຕາມລະບົບປົກກະຕິ;
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີ ຄວາມຈຳເປັນ ຕ້ອງແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາ ຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຫໍສະໝຸດນັ້ນ ອົງການກວດກາຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ວັນສ້າງຕັ້ງ, ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 49. ວັນສ້າງຕັ້ງຫໍສະໝຸດ**

ວັນສ້າງຕັ້ງຫໍສະໝຸດແຫ່ງຊາດ ແມ່ນ ວັນທີ 9 ເມສາ 1818 ຊຶ່ງແຕ່ລະປີ ໃຫ້ຖືເອົາວັນດັ່ງກ່າວ ຈັດຕັ້ງພິທີສະເຫຼີມສະຫຼອງ ເພື່ອທວນຄືນມູນເຊື້ອ, ຜົນງານ, ບົດຮຽນ ເພື່ອປັບປຸງ ແລະ ພັດທະນາວຽກງານຫໍສະໝຸດໃຫ້ດີຂຶ້ນ.

**ມາດຕາ 50. ເຄື່ອງແບບ**

ໃນເວລາປະຕິບັດໜ້າທີ່ວຽກງານ ພະນັກງານຫໍສະໝຸດ ມີເຄື່ອງແບບສະເພາະ ຂອງຕົນເອງ ໂດຍແມ່ນກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ກຳນົດ.

**ມາດຕາ 51. ເຄື່ອງໝາຍ ແລະ ຕາປະທັບ ຂອງຫໍສະໝຸດ**

ຫໍສະໝຸດ ມີເຄື່ອງໝາຍ ສະເພາະຂອງຕົນເອງ ໂດຍກຳນົດເອົາຮູບແບບຂອງ ຫໍໄຕ ວັດສີສະເກດ ເປັນສັນຍາລັກ.

ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ ຫໍສະໝຸດແຕ່ລະປະເພດ ມີຕາປະທັບ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ, ສຳລັບ ຫ້ອງອ່ານ ບໍ່ມີຕາປະທັບ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 52. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ກົດໝາຍສະບັບນີ້ ເປັນຕົ້ນ ການມອບ ປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸທີ່ມີຄຸນຄ່າ ດ້ວຍຄວາມສະໝັກໃຈ ຫຼື ຕາມການຮ້ອງຂໍຂອງຫໍສະໝຸດ, ການປະກອບສ່ວນໃນການປົກປັກຮັກສາປຶ້ມ, ສິ່ງພິມອື່ນ

ແລະ ໂສດທັດສະນະວັດຖຸ ໃນຫໍສະໝຸດ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 53. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ໄດ້ກຳນົດໄວ້ໃນມາດຕາ 36, 37 ແລະ 38 ຂອງກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 54. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 55. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ຫົກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້